

## ລາຍລະອຽດດ່ວນກ່ຽວກັບການຈ່າຍຄ່າ ໃຫ້ຍ້ອນຂາດງານໄປຊ່ວຍຄອບຄົວ, (PFL)

- ມີການຈ່າຍຄ່າ ແຕ່ບໍ່ຮັບຮອງວ່າຈະໄດ້ເຮັດວຽກ ເໝືອນເດີມ
- ມີພວກສັງຄົມສົງເຄາະມາຊ່ວຍໜ້ອຍນຶ່ງໃຫ້ ພວກສະມາຊິກອາສັຍຢູ່ນຳ ພໍ່ແມ່, ລູກ, ຜົວ, ເມັຽ, ຫຼື ເດັກເກີດໃໝ່
- ຕ້ອງຈ່າຍໃຫ້ພະນັກງານທີ່ມີປະກັນພັຍ SDI (ຫຼືຈຳພວກມີການຕັດເງິນໄປໃສ່ SDI)
- ພາຍໃນ ສິບສອງເດືອນຈະມີສິດໄດ້ຮັບ ຈ່າຍຄ່າດົນເຖິງ ຫົກອາທິດ (6 weeks of benefits in a 12-month period)
- ສາມາດຊ່ວຍໄດ້ປະມານ ຫ້າສິບຫ້າ ສ່ວນຮ້ອຍຂອງລາຍໄດ້ (approximately 55 percent of lost wages)

ຢູ່ຣັຖ ກາລີຟໍເນັຽ (California)
ມີປະກັນພັຍຈ່າຍຄ່າໃຫ້ອອກໄປຊ່ວຍ
ຄອບຄົວເມື່ອຈຳເປັນນີ້ແມ່ນກົດໝາຍໃໝ່

# Paid Family Leave

Insurance Program

ມີປະກັນພັຍຈ່າຍຄ່າໃຫ້ຍ້ອນຂາດງານໄປຊ່ວຍຄອບຄົວ,
ເວລາຊ່ວຍເບິ່ງເບຍງແມ່ນ 1-877-238-4373

ເພື່ອລາຍລະອຽດຕ່າງໆ, ເຊີນໄປເບິ່ງ
www.edd.ca.gov

1-877-238-4373 (ພາສາ ອັງກິດ)
1-800-445-1312 (TTY)

EDD ຫຼືອົງການຊອກຫາງານ
ເປັນອົງການບໍຣິຫານງານແບບສະເໝີພາບໃຫ້ທຸກໆທ່ານທຽບເທົ່າກັນ
ໂດຍບໍ່ເລືອກໃຜທັງໝົດ, ຖ້າທ່ານສົນໃຈຫຼືຕ້ອງການໃບຮ້ອງຂໍຕ່າງໆ ຫຼື
ຄຳຮ້ອງຂໍແບບພິເສດໃຫ້ໂທໄປຫາ 877-238-4373 (ປາກ),
ຫລື ປາກກືກ 800-445-1312.

ປື້ມຫົວນີ້ມີລາຍລະອຽດຈຳກັດເທົ່ານັ້ນ
ຈະບໍ່ມີສ່ວນພົວພັນກັບກົດຣະບຽດຫຼືຂໍ້ເງື່ອນໄຂຂອງກົດໝາຍຕ່າງໆ

ຂອງຣັຖ ກາລີຟໍເນັຽ (California)

EDD Employment Development Department State of California



## ເວລາທ່ານຕ້ອງການ ແມ່ນໃນເມື່ອມີດັ່ງນີ້,

ມີປະກັນພັຍຈ່າຍຄ່າໃຫ້ອອກໄປຊ່ວຍຄອບຄົວ,



## ຍ້ອນມີຈ່າຍຄ່າຊ່ວຍຄອບຄົວ ທ່ານສາມາດປະຕິບັດຕາມໃຈ ໃນເມື່ອມີຄວາມຕ້ອງການ

ຊີວິດຂອງພວກທຳງານທຸກໆ ມື້ນີ້ ມີເວລາໃດ ເວລາໜຶ່ງ ບຸກຄົນເຫຼົ່ານີ້ຕ້ອງການເວລາອອກໄປຮັກສາເບິ່ງແຍງຜູ້ທີ່ເພິ່ນຮັກເພິ່ນແພງ. ບາງທີອາດຈະແມ່ນພໍ່ແມ່ໄປຊ່ວຍລູກຜູ້ຫາກໍ່ເກີດໃໝ່ໆ. ບາງທີກໍ່ແມ່ນອອກໄປຊ່ວຍຫຼືເບິ່ງແຍງ ພໍ່ແມ່, ລູກ, ຜົວ, ເມັຽ, ຫຼືສະມາຊິກໃນຄອບຄົວຜູ້ກຳລັງຖືກເຈັບປ່ວຍໜັກ. ກາລີຟໍເນັຽ (California) ມີກົດໝາຍໃໝ່ມາຈ່າຍຄ່າຕອບແທນ ເພື່ອໃຫ້ຜູ້ກ່ຽວໄດ້ມີເວລາອອກໄປຊ່ວຍຄອບຄົວໃນເມື່ອມີການກະທົບກະເທືອນແບບນີ້. (**ຄຳເຕືອນ:** ສຳຫລັບເພື່ອນຮ່ວມເພດດຽວກັນນັ້ນ ຕ້ອງແມ່ນພວກທີ່ຈົດຊື່ໄດ້ຖືກຕ້ອງຈາກເລຂານຸການຂອງຣັຖຈຶ່ງສົມຄວນ ໄດ້ຮັບຜົນປະໂຍດເຫລົ່ານີ້.)



## ແຜນທີ່ມີຜົນປະໂຍດແກ່ທ່ານ ແລະຄອບຄົວ

ຣັຖ ກາລີຟໍເນັຽ ເປັນຣັຖທຳອິດທີ່ໄດ້ມີປະກັນພັຍຊ່ວຍຄົນງານແລະຄອບຄົວຂອງເພິ່ນໃນເມື່ອມີການເຈັບເປັນແບບນີ້. ລາຍໄດ້ນັ້ນແມ່ນສຸດແລ້ວແຕ່ລາຍໄດ້ປະຈຳແຕ່ລະສີ່ເດືອນຜ່ານມາຢ່າງໜ້ອຍແມ່ນ ຫ້າສິບດອນຫຼາຍສຸດແມ່ນ ແປດຮ້ອຍສີ່ສິບໄປ ເຖິງຫົກອາທິດ, ($50 to a maximum of $917 per week up to six weeks): ຕໍ່ອາທິດ.

## ການຈ່າຍຄ່າຊ່ວຍຄອບຄົວໃຫ້ຄົນງານຂອງຣັກ (ກາລີຟໍເນັຽ) California

**ມີການຈ່າຍຄ່າແຕ່ບໍ່ຮັບຮອງວ່າຈະໄດ້ເຮັດວຽກເໝືອນເດີມ.** ວຽກການງານຂອງທ່ານ**ອາດຈະ**ຖືກປ້ອງກັນໄວ້ໃຫ້ທ່ານ**ຫາກວ່າ**ສະຖານທີ່ທຳງານຂອງທ່ານໄດ້ຢູ່ພາຍໃຕ້ການດູແລໄປຕາມກົດຣະບຽດຂອງຈ່າຍຄ່າຊ່ວຍຄອບຄົວຂອງຣັຖບານກາງ (Federal Family Medical Leave Act and the California Family Rights Act.) ທ່ານຕ້ອງແຈ້ງສາເຫດຕ່າງໆ ຂອງທ່ານໃຫ້ສະຖານທີ່ທຳງານຕາມເງື່ອນໄຂທຸກໆຂໍ້ ຂອງສະຖານທີ່ທຳງານຢ່າງລະອຽດຮຽບຮ້ອຍ.

ກ່ອນທ່ານຈະໄດ້ຮັບເງິນຈ່າຍຄ່າຊ່ວຍຄອບຄົວ ທ່ານຕ້ອງໄດ້ປະຕິບັດດັ່ງລຸ່ມນີ້:

- ຕ້ອງມີປະກັນພັຍຂອງຣັຖ State Disability Insurance (SDI) (ຫຼືໄດ້ຕັດເງິນເຂົ້າໄປຫາ SDI) ຫລືໄດ້ຕັດຢ່າງໜ້ອຍ$300 ພາຍໃນຣະຍະກຳລັງທຳງານຢູ່
- ປະກອບເອກສານ ທຸກແຜ່ນໃຫ້ຖືກຕ້ອງ, ຮຽບຮ້ອຍ, ຕາມຄວາມຈິງ, ຖືກຕ້ອງຕາມເວລາຢ່າງລະອຽດ.
- ຍື່ນລາຍລະອຽດຕ່າງໆ ບໍ່ໃຫ້ກ່ອນ 9 ວັນ ແລະບໍ່ໃຫ້ພາຍຫລັງ 49 ວັນທີ່ທ່ານໄດ້ຂາດງານຫລືໄດ້ອອກງານໄປຊ່ວຍຄອບຄົວ
- ຍື່ນແລະສົ່ງໃບຢັ້ງຢືນວ່າຄວາມຕ້ອງການຊ່ວຍເຫລືອຂອງຜູ້ກ່ຽວແມ່ນຫຍັງຢ່າງລະອຽດຮຽບຮ້ອຍ
- ຍື່ນສຳເນົາຫລືເອກສານຢັ້ງຢືນເຖິງຄວາມຕິດພັນ, ໃກ້ສິດຍ້ອນປະບຸໄດ້
- ຖ້າວ່າສະຖານທີ່ທຳງານຂອງທ່ານຕ້ອງການແລ້ວ ທ່ານຈະຕ້ອງໃຊ້ເວລາ ລາພັກຂອງທ່ານສອງອາທິດກ່ອນຈະໄດ້ຮັບຄ່າຈ່າຍຊ່ວຍ
- ຕ້ອງຂາດເງິນຫຼືບໍ່ໄດ້ຮັບລາຍໄດ້ເຖິງ ເຈັດວັນ(7) ວັນກ່ອນ ຕໍ່ປີ ລື້ພາຍໃນສິບສອງເດືອນ

**ທ່ານອາດຈະບໍ່ໄດ້ຮັບເງິນ**ຈ່າຍຄ່າຊ່ວຍຄອບຄົວຖ້າວ່າ:

- ທ່ານໄດ້ຮັບເງິນຈາກ (SDI) ເງິນຕົກງານ, ເງິນພິການຍ້ອນບໍ່ສາມາດເຮັດວຽກໄດ້
- ເວລາທ່ານອອກມາຊ່ວຍຄອບຄົວນັ້ນທ່ານບໍ່ໄດ້ທຳງານຫຼືຍັງບໍ່ທັນມີງານທຳເທື່ອ
- ທ່ານຍັງມີລາຍໄດ້ຢູ່ຄືເກົ່າ
- ຄວາມຕ້ອງການຊ່ວຍຂອງທ່ານບໍ່ໄດ້ຮັບໃບຢັ້ງຢືນຈາກທ່ານໝໍ ຫຼືສະຖານທີ່ປິ່ນປົວຕ່າງໆ
- ທ່ານກຳລັງຖືກຄວບຄຸມຢູ່ຍ້ອນວ່າໄດ້ກະທຳຜິດຕໍ່ກົດໝາຍ



ທ່ານມີສິດໄດ້ຮັບດັ່ງນີ້:

- ຊາບ ຫຼື ຮູ້ເຖິງລາຍລະອຽດ ຫຼືສາເຫດຕ່າງໆ ທີ່ມີສ່ວນພົວພັນກັບການຕັດສິນໃຈຫຼືຜົນປະໂຍດທີ່ທ່ານສົມຄວນຈະໄດ້ຮັບ
- ມີສິດອຸທອນກັນເປັນລາຍລະອັດສອນກ່ຽວກັບການຕັດສິນວ່າຄວນຈະໄດ້ຮັບຫຼືບໍ່ໄດ້ຮັບຄ່າຊ່ວຍຄອບຄົວ,
- ການອຸທອນຫລືການຕັດສິນຈາກກຸມເຮຽງງານຂອງຣັຖຕາມກົດໝາຍ ຂອງຣັຖ California Unemployment Insurance Appeals Board Administrative Law Judge.
- ສິດສ່ວນຕົວແລະລາຍລະອຽດຕ່າງໆ ກ່ຽວກັບທ່ານເອງແມ່ນຈະໄດ້ຮັກສາໄວ້ບໍ່ໃຫ້ຜູ້ໃດຮູ້ນອກຈາກເປັນພາຣະກິດຂອງກົດໝາຍເທົ່ານັ້ນ

## ຕິດຕໍ່ກັບພວກຈ່າຍຄ່າຊ່ວຍຄອບຄົວ

ຖ້າຢາກໄດ້ລາຍລະອຽດກ່ຽວກັບປະກັນພັຍຈ່າຍຄ່າອອກງານໄປຊ່ວຍຄອບຄົວນີ້ ເຊີນຕິດຕໍ່ຫາພວກເຮົາໄດ້. ຫາກທ່ານແມ່ນແມ່ນັ້ນພາຍຫລັງສິ້ນສຸດການອອກລູກຫລືຖືພາແລ້ວ ພວກເຮົາຈະສົ່ງຟອມ (PFL) ມາໃຫ້ທ່ານເອງ, ຟອມສຳຫລັບພວກເກີດລູກໃໝ່ແມ່ນ (DE 2501FP) ຖ້າທ່ານມີ ຄຳຖາມ ຫຼື ຢາກຊາບກ່ຽວກັບຜົນປະໂຍດເຫຼົ່ານີ້ເຊີນໂທມາຫາພວກເຮົາໃນວັນນີ້.

1-877-238-4373 (ພາສາ ອັງກິດ)
1-800-445-1312 (TTY ພາສາ ກົກ)

ເພື່ອລາຍລະອຽດຕ່າງໆ ເຊີນຫາຕາມ www.edd.ca.gov

ຄຳຮ້ອງຂໍຈ່າຍຄ່າອອກງານຊ່ວຍຄອບຄົວຕ້ອງສົ່ງດັ່ງນີ້:
P.O. Box 997017, Sacramento, CA 95799-7017